# ກອງທຶນຫລຸດຜ່ອນຄວາມທຸກຍາກ
# ໜ້າທີ່ຮັບຜິດຊອບ

ຕຳແໜ່ງ: ພັດທະນາຊຸມຊົນ ຂັ້ນເມືອງ

ຈຳນວນຕຳແໜ່ງ: ຫ້ອງການລະ 1 ຄົນ

ລາຍງານໂດຍກົງຫາ: ຫົວໜ້າທີມງານຂັ້ນເມືອງ, ພັດທະນາຊຸມຊົນຂັ້ນແຂວງ

ພົວພັນວຽກໃກ້ຊິດກັບ: ທີມງານ ທລຍ ເມືອງ, ພັດທະນາຊຸມຊົນຂັ້ນແຂວງ

ໜ້າທີ່ຮັບຜິດຊອບທົ່ວໄປ: ຮັບຜິດຊອບວຽກງານປຸກລະດົມຂົນຂວາຍ, ສຶກສາ, ປູກຈິດສຳນຶກ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງໃນການພັດທະນາຕົນເອງ ແລະ ຊຸມຊົນຂອງເຂົາເຈົ້າ

ບ່ອນປະຈຳການ: ຫ້ອງການ ທລຍ ແຂວງ ຢູ່ແຕ່ລະແຂວງເປົ້າໝາຍ

ປະເພດສັນຍາ: ເປັນລາຍປີ ໂດຍອີງຕາມຜົນການປະຕິບັດວຽກຕົວຈິງ ໃນແຕ່ລະໄລຍະ. ມີໄລຍະທົດສອບວຽກ 3-6 ເດືອນ ໃນເວລາເຂົ້າເຮັດວຽກໃໝ່.

**ໜ້າທີ່ ແລະ ຄວາມຮັບຜິດຊອບຫລັກ:**

- ຊ່ວຍເຫລືອປະຊາຊົນໃນການກຳນົດຄວາມຕ້ອງການຂອງເຂົາເຈົ້າ, ການວາງແຜນ ແລະ ຈັດຕັ້ງ ປະຕິບັດໂຄງການຍ່ອຍ, ແລະຮັບຜິດຊອບບັນຊີການໃຊ້ຈ່າຍທຶນກ່ຽວກັບໂຄງການຍ່ອຍ
- ຕິດຕາມ ແລະຊີ້ນຳກ່ຽວກັບຂັ້ນຕອນ ແລະຂະບວນການຕ່າງໆຂອງ ທລຍ
- ພົວພັນກັບບັນດາອົງການຈັດຕັ້ງສື່ມວນຊົນຕ່າງໆ, ອຳນາດການປົກຄອງທ້ອງຖິ່ນ ແລະ ການຈັດຕັ້ງ ຂອງສີ່ທີ່ຢູ່ຂັ້ນຊຸມຊົນ/ທ້ອງຖິ່ນ ເພື່ອເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບໂຄງການກອງທຶນຫລຸດຜ່ອນຄວາມ ທຸກຍາກຢູ່ທຸກໆລະດັບຂອງພື້ນທີ່ເປົ້າໝາຍຂອງ ທລຍ (ແຂວງ, ເມືອງ, ກຸ່ມບ້ານ ແລະ ບ້ານ) ໂດຍນຳໃຊ້ ວິທີການວາງແຜນແບບມສ່ວນຮ່ວມ ແລະ ເຄື່ອງມືການກະຈາຍຂໍ້ມູນຂ້າວສານ-ສຶກສາ-ປະຊາສຳພັນ ຢ່າງເໝາະ ສົມ.
- ຈັດກອງປະຊຸມ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນກັບກຸ່ມບ້ານອື່ນໆ
- ສົ່ງເສີມການວາງແຜນແບບມີສ່ວນຮ່ວມ ແລະ ການຕັດສິນໃຈຂອງຊຸມຊົນໃນ ການຈັດຕັ້ງປະຕິບັດໂຄງການຍ່ອຍຂອງ ທລຍ ໂດຍສະເພາະແມ່ນບັນດາຊົນເຜົ່າ ແລະແມ່ຍິງ
- ປຸກລະດົມຂົນຂວາຍຜູ້ປະສານງານດ້ານພັດທະນາຊຸມຊົນຢູ່ຂັ້ນກຸ່ມບ້ານ ເພື່ອໃຫ້ເຂົາເຈົ້າສາມາດນຳພາ ຊຸມຊົນໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມແບບຍືນຍົງ

- ຮັບປະກັນວ່າ ທຸກໆບ້ານທີ່ໄດ້ຮັບໂຄງການຍ່ອຍແລ້ວນັ້ນ, ໄດ້ສ້າງຕັ້ງກອງທຶນປົກປັກຮັກສາລວມທັງຄະ ນະກຳມະການຄຸ້ມຄອງບໍລິຫານ ໂດຍມີກົດລະບຽບທີ່ເຄັ່ງຄັດ
- ຊ່ວຍເຫລືອ ແລະຊີ້ນຳນຳພາຜູ້ປະສານງານຂັ້ນກຸ່ມບ້ານ, ຕົວແທນ ແລະທີມງານຂັ້ນບ້ານ ໃນການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ
- ຊຸກຍູ້ໃຫ້ຊຸມຊົນ ແລະ ອຳນາດການປົກຄອງ ຈັດຕັ້ງປະຕິບັດກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ ເຊີ່ງອາດຈະລວມມີ ບັນຫາທີ່ກ່ຽວຂ້ອງກັບການກໍ່ສ້າງ, ການແຊກແຊງ, ຄວາມບໍ່ໂປ່ງໃສ ແລະຂໍ້ຂັດແຍ້ງຕ່າງໆ ທີ່ຕິດພັນກັບວຽກງານ ທລຍ
- ລາຍງານກ່ຽວກັບກັບການຈັດຕັ້ງປະຕິບັດກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ ໃຫ້ພັດທະນາຊຸມຊົນຂັ້ນແຂວງ ຢ່າງເປັນປົກກະຕິ
- ຂຽນບົດລາຍງານປະຈຳເດືອນກ່ຽວກັບວຽກງານພັດທະນາຊຸມຊົນ ຊຶ່ງປະກອບດ້ວຍການວິເຄາະສະພາບຄວາມຫຍຸ້ງຍາກ ແລະ ການແກ້ໄຂບັນຫາ. ຮັບປະກັນວ່າບົດລາຍງານດັ່ງກ່າວ ໄດ້ຮັບການປະກອບຄຳຄິດ ເຫັນຈາກຫ້ອງການເມືອງ ແລະແຂວງກ່ອນຈະນຳໄປຈັດຕັ້ງປະຕິບັດ
- ປະສານງານ ແລະຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ອົງການຈັດຕັ້ງກ່ຽວກັບສີ່, ອົງການຈັດຕັ້ງສາກົນ ແລະໂຄງການອື່ນໆທີ່ດຳເນີນວຽກງານຢູ່ໃນເມືອງ (ລວມທັງພາກເອກະຊົນ) ເພື່ອບັນລຸຕາມເປົ້າໝາຍຂອງ ທລຍ
- ຊ່ວຍເຫລືອໃນການເຜີຍແຜ່ຂໍ້ມູນຂ່າວສານຂອງ ທລຍ ຢູ່ກະດານຂ່າວຂອງກຸ່ມບ້ານ
- ປະຕິບັດໜ້າວຽກອື່ນໆ ຕາມຄວາມຮຽກຮ້ອງຕ້ອງການ ແລະ ການມອບໝາຍຂອງການຈັດຕັ້ງ.

**ຄຸນວຸດທິ ແລະ ປະສົບການ:**

- ຮຽນຈົບ ຫລືມີປະສົບການດ້ານການພັດທະນາຊຸມຊົນ ຫລື ຊົນນະບົດ
- ມີຄວາມຮູ້ກ່ຽວກັບວິທີການວາງແຜນແບບມີສ່ວນຮ່ວມ ແລະເຄື່ອງມືໃນການປະເມີນການມີສ່ວນຮ່ວມຢູ່ຊົນນະບົດ
- ມີປະສົບການໃນການຈັດກອງປະຊຸມ ແລະ ຝຶກອົບຮົມ
- ມີຄວາມຮູ້ ແລະປະສົບການຈຳນວນໜຶ່ງທາງດ້ານການນຳໃຊ້ຄອມພິວເຕີເຊັ່ນ: Microsoft Word, Excel, Power Point etc.
- ຖ້າສາມາດເວົ້າພາສາຊົນເຜົ່າຂອງທ້ອງຖິ່ນ ຈະໄດ້ຮັບການພິຈາລະນາເປັນພິເສດ.
- ຖ້າເປັນຜູ້ຍິງ, ໂດຍສະເພາະແມ່ນຊົນເຜົ່າ ແລະ ເຄີຍເຮັດວຽກກ່ຽວກັບການພັດທະນາຊົນນະບົດມາ ກ່ອນຈະໄດ້ຮັບການພິຈາລະນາເປັນກໍລະນີພິເສດ.